ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຂສລ ແລະ ບີເອັສເຄ ເຊັນບົດບັນທຶກຄວາມເຂົ້າໃຈກ່ຽວກັບການຊ່ວຍເຫຼືອລ້າດ້ານວິຊາການໃນການສ້າງຜະລິດຕະພັນໃຫ້ຄະແນນສິນເຊື່ອບຸກຄົນ




ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອ ແຫ່ງ ສປປ ລາວ (ຂສລ) ແລະ ບໍລິສັດ ບີເອສເຄ ລົງທຶນ ແລະ ບໍລິການ ຈໍາກັດຜູ້ດຽວ ໄດ້ຈັດພິທີເຊັນບົດບັນທຶກການຊ່ວຍເຫຼືອລ້າ ດ້ານວິຊາການໃນການສ້າງຜະລິດຕະພັນໃຫ້ຄະແນນສິນເຊື່ອບຸກຄົນ (Credit Scoring) ໃນວັນທີ 04 ມີນາ 2021 ຢູ່ທີ່ຫ້ອງປະຊຸມກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ (ທຫລ) ໂດຍການໃຫ້ກຽດເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ ແລະ ມີບັນດາຄະນະປະທານ, ຄະນະກົມ, ຄະນະອໍານວຍການ ກ່ຽວຂ້ອງ ຂອງທັງສອງພາກສ່ວນເຂົ້າຮ່ວມ.

ການລົງນາມໃນບົດບັນທຶກການຊ່ວຍເຫຼືອລ້າ ດ້ານວິຊາການໃນການສ້າງຜະລິດຕະພັນໃຫ້ຄະແນນສິນເຊື່ອບຸກຄົນ (Credit Scoring) ໃນຄັ້ງນີ້ຕາງໜ້າໂດຍ ທ່ານ ນາງ ວິນຄໍາ ລຸນທອນ ຜູ້ອໍານວຍການໃຫຍ່ ບໍລິສັດ ຂສລ ແລະ ທ່ານ ດົວລິບ ເຈສຸທາສັນ ຜູ້ອໍານວຍການ ບໍລິສັດ ບີເອສເຄ, ຮອງປະທານກຸ່ມບໍລິສັດ AIF ແລະ ການສ້າງຜະລິດຕະພັນໃຫ້ຄະແນນສິນເຊື່ອຂອງບຸກຄົນ (Credit Scoring) ກໍແມ່ນວຽກງານໜຶ່ງທີ່ສໍາຄັນ ເຊິ່ງນອນຢູ່ໃນແຜນພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ກໍເພື່ອປະຕິບັດຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ກໍຄືການປະເມີນຂອງທະນາຄານໂລກ ເຊິ່ງ ບໍລິສັດ ບີເອສເຄ ລົງທຶນ ແລະ ບໍລິການ ຈໍາກັດຜູ້ດຽວ ໄດ້ໃຫ້ການຊ່ວຍເຫຼືອລ້າດ້ານວິຊາການໃຫ້ແກ່ ທຫລ ຕາງໜ້າໂດຍ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນການສ້າງຜະລິດຕະພັນການໃຫ້ຄະແນນສິນເຊື່ອບຸກຄົນ (Credit Scoring) ໃນມູນຄ່າ 100.000 ໂດລາສະຫະລັດ ໂດຍບໍ່ມີເງື່ອນໄຂ ຫຼື ຂໍ້ຜູກມັດ. ພ້ອມທັງມອບ Source Code ຂອງລະບົບທີ່ພັດທະນາໃຫ້ແກ່ ບໍລິສັດ ຂສລ ນໍາໃຊ້, ປັບປຸງ ແລະ ພັດທະນາຕໍ່ຍອດໃນຕໍ່ໜ້າບົນພື້ນຖານບໍ່ໃຫ້ສິ່ງຕໍ່ ຫຼື ແຈກຢາຍໃຫ້ພາກສ່ວນອື່ນ ແລະ ຮັບຮອງວ່າຈະສ້າງຜະລິດຕະພັນດັ່ງກ່າວໃຫ້ສໍາເລັດໂດຍພື້ນຖານ ເພື່ອໃຫ້ທັນຕາມກໍານົດເວລາການປະເມີນຂອງທະນາຄານໂລກ ໃນເດືອນ 03/2021.




ໃນໂອກາດດັ່ງກ່າວ, ທ່ານຮອງຜູ້ອຳນວຍການ ທຫລ ໄດ້ກ່າວວ່າ: ວຽກງານຂໍ້ມູນຂ່າວສານສິນເຊື່ອ ໃນ ສປປ ລາວ ເຖິງຈະບໍ່ແມ່ນວຽກງານທີ່ໃໝ່ ແຕ່ກໍເປັນວຽກງານໜຶ່ງທີ່ທ້າທາຍ ໃນການພັດທະນາ ແລະ ຍົກລະດັບເພື່ອໃຫ້ມີຄວາມທັນສະໄໝ ໃຫ້ທຽບເທົ່າກັບສາກົນນັ້ນ ເຊິ່ງຕິດພັນກັບ ການລົງທຶນໃສ່ເຕັກໂນໂລຊີທີ່ທັນສະໄໝ ແລະ ຕິດພັນກັບຫຼາຍພາກສ່ວນເປັນຕົ້ນແມ່ນຂໍ້ມູນຕ່າງໆ. ໃນການສ້າງຜະລິດຕະພັນໃຫ້ຄະແນນສິນເຊື່ອບຸກຄົນ ເພື່ອເປັນຂໍ້ມູນໃຫ້ບັນດາສະຖາບັນການເງິນນຳໃຊ້ເຂົ້າໃນການພິຈາລະນາສິນເຊື່ອຂອງຕົນຢ່າງມີປະສິດທິພາບຍິ່ງຂຶ້ນນັ້ນ ກໍເປັນໂອກາດທີ່ດີທີ່ບໍລິສັດ ບີເອສເຄລົງທຶນ ແລະ ບໍລິການຈຳກັດຜູ້ດຽວ ໄດ້ເຫັນຄວາມສຳຄັນ ແລະ ສົນໃຈໃຫ້ການຊ່ວຍເຫຼືອລ້າແກ່ ບໍລິສັດ ຂສລ ເຊິ່ງເປັນບາດກ້າວໜຶ່ງໃນການພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອໃຫ້ເປັນສູນກາງໃນການແລກປ່ຽນຂໍ້ມູນທີ່ຕິດພັນກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ເພື່ອນຳມາສ້າງຜະລິດຕະພັນໃຫ້ໄດ້ຕາມມາດຕະຖານສາກົນ ທີ່ມີຄວາມຄົບຖ້ວນ, ມີຄຸນນະພາບ, ມີຄວາມທັນສະໄໝ, ຮັບປະກັນຄວາມປອດໄພດ້ານຂໍ້ມູນຂ່າວສານສິນເຊື່ອ ກ້າວໄປສູ່ການເຊື່ອມໂຍງກັບພາກພື້ນ ແລະ ສາກົນໃນອານະຄົດ.

**#ຂ່າວ ແລະ ພາບໂດຍ: ນ. ປາໄນ ພົນທະລາ**